ພິທີເປີດ

ງານວາງສະແດງ ສິນຄ້າ ກະສິກຳອິນຊີ

- **ຮຽນ:** ບັນດາທ່ານແຂກຜູ້ມີກຽດ, ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າກົມ, ຮອງກົມຈາກບັນດາກະຊວງແລະຂະແໜງການຕ່າງໆ
- ຜູ້ຜະລິດແລະຜູ້ປະກອບການ, ບັນດາບໍລິສັດຕ່າງໆ
- ແຂກທີ່ມີກຽດມາຈາກພາຍໃນແລະຕ່າງປະເທດ

ງານວາງສະແດງສິນຄ້າກະສິກຳອິນຊີ ຄັ້ງນີ້ ໄດ້ຈັດຂຶ້ນໃນທາມກາງ ບັນຍາກາດ ທີ່ພັກ-ລັດ ພ້ອມດ້ວຍປະຊາຊົນບັນດາເຜົ່າພ້ອມອອກແຮງແຂ່ງຂັນກັນສ້າງຜົນງານຂໍ່ານັບຮັບຕ້ອນວັນຊາດທີ 2 ທັນວາ ຄົບຮອບ 44 ປີ.

ເປົ້າໝາຍການຈັດງານຄັ້ງນີ້ ແມ່ນເພື່ອໂຄສະນາຜົນສຳເລັດອັນໃຫ່ຍຫຼວງ ຂອງການພັດທະນາກະສິກຳອິນຊີໃນໄລຍະຜ່ານມາຕັ້ງແຕ່ປີ 2004 ເຖິງ 2019. ພ້ອມດຽວກັນນັ້ນ ກໍ່ເປັນການສົ່ງເສີມການຜະລິດ ກະສິກຳອິນຊີ ຕາມມາດຕະຖານກະສິກຳອິນຊີ ແລະ ກ້າວໄປເຖິງການຜະລິດຕາມມາດຕະຖານຂອງພາກພື້ນ ແລະ ສາກົນ ເພື່ອເປັນສິນຄ້າ ທັງເປັນການປົກປ້ອງຜູ້ຜະລິດ ແລະ ຜູ້ບໍລິໂພກ ແລະ ການທຳລາຍສະພາບແວດລ້ອມ.

ໃນງານນີ້, ບັນດາທ່ານ ຈະໄດ້ເຫັນ ໄດ້ຊິມ ໄດ້ຊິມ ໄດ້ແຖມ ແລະ ໄດ້ຊື້ ຜົນຜະລິດ ແລະ ຜະລິດຕະພັນ ທີ່ໄດ້ຮັບການຢັ້ງຢືນຄຸນນະພາບຕາມມາດຕະຖານກະສິກຳອິນຊີ ທີ່ໄດ້ຮັບການຄັດສັນ ລວບລວມ ເອົາມາເພື່ອຢັ້ງຢືນ ໃຫ້ບັນດາທ່ານ ໄດ້ເຫັນຜົນງານ ຈາກຜົນສຳເລັດ ຈາກການພັດທະນາສຳເລັດ ທີ່ລາວໄດ້ເຮັດຂຶ້ນມາ ໃນຂອບເຂດທົ່ວປະເທດ.

ເຂົ້າຮ່ວມງານວາງສະແດງໃນຄັ້ງນີ້ ໄດ້ມີກຸ່ມຜູ້ຜະລິດ, ສະມາຄົມ, ສະຫະກອນ, ຜູ້ປະກອບການ, ບໍລິສັດ ແລະ ຜູ້ປະກອບການທັງໝົດ ຈຳນວນ 78 ຫົວໜ່ວຍ. ໃນນັ້ນ, ຜູ້ເຂົ້າຮ່ວມວາງສະແດງດ້ານກະສິກຳອິນຊີ ຈຳນວນ 66 ຫົວໜ່ວຍ ແລະ ດ້ານກະສິກຳທີ່ດີ ຈຳນວນ

02 ຫົວໜ່ວຍ, ຊຶ່ງຜົນຜະລິດ ແລະ ຜະລິດຕະພັນທີ່ນຳມາວາງສະແດງໃນຄັ້ງນີ້ປະກອບມີ ພືດຜັກ, ໝາກໄມ້, ເຂົ້າ, ຊາ, ກາເຟ ແລະ ຜະລິດຕະພັນປຸງແຕ່ງຈຳນວນໜຶ່ງ.

ເນື່ອງໃນໂອກາດທີ່ສຳຄັນນີ້, ເພື່ອເປັນການເອກອ້າງເຖິງຜົນງານທີ່ຍາດມາໄດ້ ຕໍ່ການຊີ້ນຳ ນຳພາ ຂອງການນຳກະຊວງ ກະສິກຳ ແລະ ປ່າໄມ້ ກໍ່ຄືຂະແໜງການທີ່ກ່ຽວຂ້ອງ, ຂ້າພະເຈົ້າຂໍຕາງໜ້າໃຫ້ແກ່ຄະນະຈັດຕັ້ງ, ຄະນະພັກກ່າວເປີດພິທີງານວາງສະແດງສິນຄ້າກະສິກຳສະອາດ, ພ້ອມດຽວກັນນັ້ນ ກໍ່ຂໍຮຽນເຊີນບັນດາການນຳ ແລະ ທຸກໆທ່ານ ຂຶ້ນເປັນສັກຂີພິຍານ ໃນງານໃນຄັ້ງນີ້ດ້ວຍ.

ຂໍຮຽນເຊີນ